# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 18 ກຸມພາ 2024 (02-18-2024)

## ຄວາມເຊື່ອທີ່ໝັ້ນໃຈ

**ຈຸດສຳຄັນໃນບົດຮຽນ:** ຄວາມເຊື່ອຈະຂະຍັບຍ້າຍທີ່ຄວາມກັງວົນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ມີຄຳເວົ້າໃຫມ່ໃນຄຳສັບຂອງຂ້າພະເຈົ້າ: ພັຍພິບັດ (Catastrophizing). ຂ້າພະເຈົ້າເອົາຄຳນີ້ມາເມື່ອຂ້າພະເຈົ້າບອກເພື່ອນວ່າຫູ້ງຂອງຂ້າພະເຈົ້າຮູ້ສຶກແປກໆ, ແລະຂ້າພະເຈົ້າອາດຈະເປັນມະເຮັງເພາະວ່າຂ້າພະເຈົ້າໄດ້ສຶກສາເບິ່ງອາການຢູ່ໃນເວັບໄຊທ໌ກ່ຽວກັບສຸຂພາບ (WebMD). ເພື່ອນໄດ້ບອກຂ້າພະເຈົ້າວ່າ: “ເຈົ້າກຳລັງເປັນພັຍພິບັດອີກຄັ້ງນຶ່ງ.” ແລະຂ້າພະເຈົ້າກໍໄດ້ເປັນແທ້. ບັນຫາກ່ຽວກັບຫູ້ງຂອງຂ້າພະເຈົ້າໄດ້ຫາຍໄປຫຼັງຈາກສອງສາມມື້. ແລະໃນທີ່ສຸດຂ້າພະເຈົ້າກໍ່ມີຊື່ສຳລັບຂະບວນການຄິດເລັກໆນ້ອຍໆທີ່ແປກປລາດທີ່ເຂົ້າມາໃນໃຈຂອງຂ້າພະເຈົ້າໃນເມື່ອສິ່ງເລັກນ້ອຍເລີ່ມເກີດຂຶ້ນ. **ຂ້າພະເຈົ້າສາມາດຈົມຢູ່ໃນ<u>ຄວາມກັງວົນ</u>ໄດ້ໄວເທົ່າໃດ!**

ຖ້າຫາກວ່າພວກເຮົາບໍ່ມີຄວາມເຊື່ອ, ພວກເຮົາສາມາດຊອກຫາຫຼາຍສິ່ງຫຼາຍຢ່າງທີ່ຈະຕ້ອງກັງວົນ. ຕົວຢ່າງຄື: ບຳນານ, ການຈະລາຈົນ, ການຜ່າຕັດເລເຊີ, ຂີ້ກະຕອດ, ພັກປະຊາທິປະໄຕ, ພັກຣີພັບຣີແກັນ, ການປະຕິຮູບພາສີ, ອາຫານທ່ຽງຂອງໂຮງຮຽນ, ສຸຂພາບເສັ້ນເລືອດແດງ, ປືນ, ຫຼານ, ການອັກເສບອັນເຈັບປວດຂອງຂໍ້ສອກ, ຊຶມເສົ້າ, ຄອມພິວເຕີໄວຣັສ, ຜົມຫຼົ່ນ, ຜູ້ກໍ່ການຮ້າຍ, ຮຽກຄ່າໄຖ່, ຂີ້ເຮື້ອນ, ເປັນຕົ້ນ...*ຖ້າຫາກວ່າຫົວໃຈຂອງທ່ານເຕັ້ນໄວຂຶ້ນຫຼັງຈາກອ່ານລາຍຊື່ກ່ຽວກັບການກັງວົນເຫຼົ່ານີ້, <u>ບາງທີທ່ານຈຳເປັນຕ້ອງການຄວາມເຊື່ອຈັກໜ້ອຍນຶ່ງ</u>.*

ຄວາມເຊື່ອທີ່ໝັ້ນໃຈເປັນຄາດຕະກອນ(ຜູ້ກຳຈັດ)ຄວາມກັງວົນ. ມັນເຮັດໃຫ້ຈິດໃຈຂອງພວກເຮົາສງົບລົງໃນເວລາທ່ຽງຄືນໃນຂນະທີ່ພຣະເຈົ້າຊົງຮ້ອງເພງກ່ອມໃຫ້ພວກເຮົານອນຫຼັບ. ແລະເນື້ອເພງແມ່ນໄດ້ຖືກກຳນົດໂດຍຜ່ານອາຍຸການ. ເນື້ອເພງເຫຼົ່ານີ້ຢູ່ໃນຄຳເວົ້າທີ່ພວກເຮົາສາມາດເຂົ້າໃຈໄດ້. ມັນບໍ່ແມ່ນວິທຍາສາດກ່ຽວກັບຈະຫຼວດ(rocket sciences). ພຣະເຈົ້າຊົງກະຊິບຕໍ່ຈິດວິນຍານຂອງພວກເຮົາ: <u>ຢ່າຢ້ານ</u>. ຖ້າຫາກວ່າທ່ານຢຸດຢູ່ດົນພໍ, ທ່ານຈະສາມາດໄດ້ຍິນພຣະສຸຣະສຽງຂອງພຣະອົງ: “ຢ່າຢ້ານ. ຢ່າຢ້ານ. ຢ່າຢ້ານ”

*ເມື່ອໃດທີ່ທ່ານກັງວົນກ່ຽວກັບບາງສິ່ງບາງຢ່າງທີ່ກາຍເປັນເລື່ອງທີ່ບໍ່ສຳຄັນ?*

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ລູກາ 12:22-26</u>

*22 ແລ້ວພຣະອົງຊົງກ່າວກັບພວກສາວົກວ່າ, “ດ້ວຍເຫດນັ້ນເຮົາບອກທ່ານທັງຫລາຍວ່າ ຢ່າກະວົນກະວາຍເຖິງຊີວິດຂອງຕົນວ່າຈະກິນ*
*ຫຍັງ ແລະເຖິງຮ່າງກາຍຂອງຕົນວ່າຈະນຸ່ງຫົ່ມຫຍັງ? 23 ເພາະວ່າຊີວິດກໍສຳຄັນກວ່າອາຫານ ແລະຮ່າງກາຍກໍສຳຄັນກວ່າເຄື່ອງນຸ່ງຫົ່ມ.*
*24 ຈົ່ງພິຈາລະນາເບິ່ງຝູງກາ ມັນບໍ່ໄດ້ຫວ່ານ, ບໍ່ໄດ້ກ່ຽວ, ບໍ່ມີເລົ້າ, ແລະບໍ່ມີບ່ອນເກັບຂອງໄວ້ ແຕ່ພຣະເຈົ້າຍັງຊົງລ້ຽງມັນໄວ້. ທ່ານ*
*ທັງຫຼາຍປະເສີດກວ່ານົກຫຼາຍປານໃດ? 25 ມີໃຜໃນພວກທ່ານໂດຍຄວາມກະວົນກະວາຍ ອາດຕໍ່ຊີວິດໃຫ້ຍາວອອກໄປຈັກສອກນຶ່ງໄດ້*
*ຫຼື! 26 ເຫດສັນນັ້ນຖ້າສິ່ງເລັກນ້ອຍຍັງເຮັດບໍ່ໄດ້ ທ່ານຍັງກະວົນກະວາຍເຖິງສິ່ງອື່ນອີກເຮັດຫຍັງ.*

ຫວນກັບຄືນໄປໃນປີ 2009, ຂ້າພະເຈົ້າພວມຕຽມຕົວຂັບຣົດເຂົ້າໄປໃນວົງວຽນໃນຂນະທີ່ຄົນຂັບຣົດຕໍ່ໜ້າຂ້າພະເຈົ້າຟ້າວຂັບຣົດຕັດໜ້າຂ້າພະເຈົ້າອອກມາ(ໂດຍບໍ່ເບິ່ງໜ້າເບິ່ງຫຼັງ). ຂ້າພະເຈົ້າຢຽບເບຣກທັນທີ ຫຼັງຈາກເລັ່ງຄວາມໄວເຕັມທີ່, ແຕ່ມັນກໍ່ຊ້າເກີນໄປ.

ຂ້າພະເຈົ້າໄດ້ມີອຸປະຕິເຫດຄັ້ງທຳອິດຂອງຂ້າພະເຈົ້າພາຍໃນຫຼາຍສິບປີ(ທົດສວັດ). ຊາຍຂັບຣົດຄົນນັ້ນໄດ້ອອກຈາກຣົດຂອງລາວແລ້ວກ່າວຂໍໂທດ. ຂ້າພະເຈົ້າກໍ່ໄດ້ກ່າວຂໍໂທດເຊັ່ນດຽວກັນ. ພວກເຮົາໄດ້ຍື່ນລາຍງານຕຳຫຼວດແລະແລກປ່ຽນຂໍ້ມູນບໍລິສັດປະກັນພັຍ. ນຶ່ງອາທິດຕໍ່ມາ, ເຈົ້າໜ້າທີ່ຕຳຫຼວດຄົນນຶ່ງໄດ້ຢືນຢູ່ໜ້າປະຕູເຮືອນຂອງຂ້າພະເຈົ້າແລະໄດ້ຍື່ນເອກກະສານທາງກົດໝາຍໃຫ້ຂ້າພະເຈົ້າ. ຂ້າພະເຈົ້າໄດ້ຖືກຟ້ອງໂດຍທະນາຍຄວາມຜູ້ຍິ່ງໃຫຍ່ທີ່ມີປ້າຍໂຄສະນາກະແຈກກະຈາຍຢູ່ທົ່ວເມືອງ. **ຂ້າພະເຈົ້າເສັຽໃຈ!** ບໍລິສັດປະກັນພັຍຂອງຂ້າພະເຈົ້າຮູ້ຈັກເກມທີ່ທະນາຍຄວາມຄົນນີ້ກຳລັງຫຼິ້ນຢູ່ແລະເຮັດໃຫ້ຂ້າພະເຈົ້າຮູ້ສຶກສະບາຍໃຈຫຼາຍຂຶ້ນກ່ຽວກັບສະຖານະການ, ຢ່າງໜ້ອຍສຳລັບ 15 ນາທີ.

ຈາກນັ້ນ, ມັນໄດ້ເລີ່ມຕົ້ນ: **ຄວາມວິຕົກກັງວົນ!** ຂ້າພະເຈົ້າສາມາດເບິ່ງຊີວິດທັງໝົດຂອງຂ້າພະເຈົ້າຕົກຢູ່ພາຍໃຕ້ນ້ຳໜັກຂອງຄຳຮ້ອງຟ້ອງຫຼາຍລ້ານໂດລາ. ວັນເວລາຜ່ານໄປເປັນຫຼາຍອາທິດ, ຂ້າພະເຈົ້າກັງວົນຫຼາຍຂຶ້ນ. ຂ້າພະເຈົ້າໄດ້ໂທຫາບໍລິສັດປະກັນພັຍທຸກໆອາທິດ, ແລະທຸກໆຄັ້ງພວກເພິ່ນໄດ້ບອກຂ້າພະເຈົ້າວ່າຍັງບໍ່ໄດ້ຮັບຄຳເວົ້າໃດໆກ່ຽວກັບອຸປະຕິເຫດ. ຫຼາຍອາທິດກໍໄດ້ຜ່ານໄປ, ຈາກນັ້ນຫຼາຍເດືອນໄດ້ຜ່ານໄປ. ຍັງບໍ່ມີຄຳເວົ້າ. ໃນຂນະທີ່ຂ້າພະເຈົ້າຂຽນ 15 ປີຫຼັງຈາກນັ້ນ, ຂ້າພະເຈົ້າຍັງບໍ່ທັນໄດ້ຮັບຂໍ້ມູນຫຍັງເລີຍຈາກທະນາຍຄວາມທີ່ໂດ່ງດັງແລະຄຳຮ້ອງຟ້ອງຂອງລາວ. ຂ້າພະເຈົ້າບໍ່ໄດ້ກັງວົນກັບມັນອີກຕໍ່ໄປ.

ພຣະເຢຊູໄດ້ຊົງກ່າວວ່າ: "**ຢ່າກັງວົນ.**" ເມື່ອພວກເຮົາເລີ່ມກັງວົນ, ພຣະເຢຊູຊົງແນະນຳໃຫ້ພວກເຮົາອອກໄປຂ້າງນອກແລະໃຊ້ເວລາຈັກໜ້ອຍດຽວສັງເກດເບິ່ງຝູງນົກ. ຝູງນົກບໍ່ມີແຜນການເບັ້ຽບຳນານ, ບໍ່ມີກຸ່ມສນັບສນຸນ, ພວກມັນບໍ່ໄດ້ເຮັດຫຍັງທີ່ພວກເຮົາເຮັດເລີຍ. <u>ສິ່ງດຽວທີ່ພວກມັນເຮັດຄືພຽງແຕ່ບິນເທົ່ານັ້ນ</u>. ບາງທີພຣະເຢຊູຊົງໃຊ້ຝູງນົກໃຫ້ເປັນຕົວຢ່າງສຳລັບພວກເຮົາເພາະວ່າພວກເຮົາເຮັດບາງສິ່ງບາງຢ່າງທີ່ບັນດາພວກນົກບໍ່ເຮັດ. **ພວກເຮົາວິຕົກກັງວົນ.** ແລະພວກມັນເຮັດບາງສິ່ງບາງຢ່າງທີ່ມະນຸດບໍ່ສາມາດເຮັດ. **ພວກມັນບິນ.** ບາງທີນີ້ແມ່ນສິ່ງທີ່ພຣະເຢຊູຊົງໄດ້ເວົ້າໃນຂນະທີ່ພຣະອົງໄດ້ຊົງກ່າວໃນຄຳປຽບທຽບຕໍ່ພວກເຮົາ. ພຣະເຢຊູຊົງນຳພວກເຮົາກັບຄືນມາສູ່ຄວາມຈິງໂດຍຊົງຕັກເຕືອນພວກເຮົາ<u>ວ່າຄວາມກັງວົນຈະບໍ່ຍືດອາຍຸຂອງພວກເຮົາອອກໄປ.</u> ມັນບໍ່ເຄີຍມີ. ໃນຄວາມ<u>ເປັນຈິງ</u>, <u>ການຢູ່ໃນສະຖານະຂອງຄວາມກັງວົນຢ່າງຕໍ່ເນື່ອງຈະເອົາ(ລົບ)ຫຼາຍປີອອກຈາກຊີວິດຂອງທ່ານ</u>. ນີ້ແມ່ນຄວາມຄິດ: **ລະຖິ້ມຄວາມກັງວົນໃຫ້ພຣະເຈົ້າ**(Worry to God). ມັນຖືກເອີ້ນວ່າ **<u>ການອະທິຖານ</u>**. ດ້ວຍເຫດນີ້, ມັນຈຶ່ງສຳຄັນຫຼາຍສຳລັບພວກເຮົາທີ່ຈະຕັ້ງໃຈໃສ່ກັບສິ່ງທີ່ຢູ່ໃນສວັນ. <u>ສິ່ງນິຣັນດອນຄືສິ່ງທີ່ເປັນຢູ່ທັງໝົດ.</u>

*ເປັນຫຍັງທ່ານຈຶ່ງຄິດວ່າຜູ້ຄົນມັກທີ່ຈະວິຕົກກັງວົນ?*

## 2. <u>ລູກາ 12:27-30</u>

*27 ຈົ່ງພິຈາລະນາເບິ່ງດອກໄມ້ວ່າມັນປົ່ງຂຶ້ນຢ່າງໃດ ມັນບໍ່ໄດ້ເຮັດການ, ມັນບໍ່ໄດ້ເຂັນຝ້າຍ ແຕ່ເຮົາບອກທ່ານທັງຫຼາຍວ່າ ເຖິງແມ່ນ
ກະສັດໂຊໂລໂມນເມື່ອບໍລິບູນດ້ວຍພະສງ່າຣາສີ ກໍບໍ່ໄດ້ທົງເຄື່ອງງາມທໍ່ດອກໄມ້ນີ້ດອກນຶ່ງ. 28 ຖ້າພຣະເຈົ້າຊົງຕົກແຕ່ງຫຍ້າທີ່ທົ່ງນາ
ຢ່າງນັ້ນ ຊຶ່ງເປັນຢູ່ວັນນີ້ແລະວັນໜ້າຕ້ອງຖິ້ມໃສ່ເຕົາໄຟເສັຽ ໂອຄົນທີ່ມີຄວາມເຊື່ອນ້ອຍເອີຍ, ພຣະອົງຈະຊົງຕົກແຕ່ງພວກທ່ານຫຼາຍ
ກວ່ານັ້ນເທົ່າໃດ? 29 ທ່ານທັງຫຼາຍຢ່າຊອກຫາວ່າຈະກິນຫຍັງ, ຫລືຈະດື່ມຫຍັງ, ແລະຢ່າກະວົນກະວາຍ. 30 ເພາະຄົນນອກສາສນາ
ທົ່ວໂລກຊອກຫາສິ່ງຂອງທັງປວງນີ້ ແຕ່ພຣະບິດາຂອງພວກທ່ານຊົງຊາບແລ້ວວ່າທ່ານຕ້ອງການສິ່ງເຫຼົ່ານີ້.*

ປີ 1978 ໄດ້ເປັນປີທີ່ຍິ່ງໃຫຍ່ສຳລັບຂ້າພະເຈົ້າ: ຂ້າພະເຈົ້າໄດ້ໄປງານເຕັ້ນລຳທີ່ໂຮງຮຽນເປັນຄັ້ງທຳອິດ. ຂ້າພະເຈົ້າໄດ້ປະຫຍັດເງິນຂອງຂ້າພະເຈົ້າແລະຊື້ເສື້ອທີ່ງາມທີ່ສຸດທີ່ຂ້າພະເຈົ້າເຄີຍໄດ້ເຫັນ. ມັນແມ່ນໂປລີແອສເຕີ(polyester)ທີ່ບໍຣິສຸດແລະມີລາຍໝາກກ້ວຍຢູ່ເທິງປົກຄໍ. ເກີບໜັງດຳຂອງຂ້າພະເຈົ້າແມ່ນເຫຼື້ອມຫຼາຍຈົນຂ້າພະເຈົ້າສາມາດມອງເຫັນເງົາສະທ້ອນຂອງຕົນເອງ. **ຂ້ອຍທັນສມັຍ!** ຂ້າພະເຈົ້າຍັງມີໂອກາດຍືມ ຄາປຣິທ ຄລາສສິກ(ຍີ່ຫໍ້ຣົດ Caprice Classic)ຂອງພໍ່ຂ້າພະເຈົ້ານຳອີກ. ມັນເປັນຣົດທີ່ລຽບທີ່ສຸດທີ່ຂ້າພະເຈົ້າເຄີຍຂັບມາ. ມັນແນ່ນອນຈະປະທັບໃຈຄູ່ນັດໝາຍຂອງຂ້າພະເຈົ້າ. ກ່ຽວກັບດອກໄມ້ແລ້ວ, ບໍ່ແມ່ນເລື່ອງຄືດຽວກັນ. ພັລຍາຂອງຂ້າພະເຈົ້າຍັງຫົວຫາດອກກຸຫຼາບສີເຫຼືອງເຊັ່ນດຽວກັບທີ່ນາງໄດ້ຮັບໃນປີ 1989. ດອກໄມ້ບໍ່ເຄີຍລ້າສມັຍຈັກເທື່ອ. ນັ້ນແມ່ນວິທີທີ່ດອກໄມ້ໄດ້ເປັນມາຫຼາຍສະຕະວັດແລ້ວ. ເປັນດ້ວຍເຫດໃດ? ເປັນເພາະຄວາມງົດງາມຂອງການຊົງສ້າງຂອງພຣະເຈົ້າບໍ່ເຄີຍລ້າ

ສມັຍຈັກເທື່ອ. **ພວກມັນແມ່ນດອກໄມ້!** ພວກມັນຍັງມີຄວາມງົດງາມໃນປະຈຸບັນດັ່ງດຽວກັບນຶ່ງພັນປີຜ່ານມາແລ້ວ.

ພຣະເຢຊູຍັງຊົງໄດ້ເຕືອນພວກເຮົາ: ເຖິງແມ່ນວ່າພວກດອກໄມ້ເຫຼົ່ານີ້ຈະງາມແລະອັສຈັນຫຼາຍແທ້ໆ, ພວກມັນກໍ່ຢູ່ທີ່ນີ້ໃນມື້ນີ້ແລະມື້ອື່ນກໍ່ຈະຈາກໄປເໝືອນກັນກັບພວກເຮົາ. ມື້ນຶ່ງ, ພວກເຮົາຈະຢູ່ໃຕ້ຫຍ້າ(ໃນດິນ). ຮ່າງກາຍທີ່ພວກເຮົາໝົກມຸ່ນຢູ່ກັບເຄື່ອງຝຶກແລ່ນ(treadmill)ແລະການຄວບຄຸມອາຫານຈະບໍ່ປາກົດໃຫ້ເຫັນອີກຕໍ່ໄປ ເພາະພວກເຮົາຈະຖືກແຍກອອກຈາກຮ່າງກາຍຂອງພວກເຮົາຊົ່ວນິຣັນດອນ. **ສິ່ງທີ່ດີທີ່ສຸດທີ່ພວກເຮົາສາມາດເຮັດແມ່ນຍອມຈຳນົນຮ່າງກາຍຂອງພວກເຮົາໃຫ້ແກ່ພຣະເຈົ້າ.**

ແທນທີ່ຈະວິຕົກກັງວົນວ່າອາຫານຄາບຕໍ່ໄປຂອງພວກເຮົາຈະມາຈາກໃສ, ພຣະເຢຊູຊົງປາຖນາໃຫ້ພວກເຮົາໄວ້ວາງໃຈໃນພຣະອົງກັບດ້ານການເງິນແລະດຳເນີນຊີວິດດ້ວຍຈຸດສຸມດຽວຂອງການຮັບໃຊ້ພຣະອົງ, ຊົມຊື່ນຍິນດີໃນພຣະອົງ, ແລະວາງໃຈໃນພຣະອົງ. ສິ່ງທີ່ດີທີ່ສຸດທີ່ພວກເຮົາສາມາດເຮັດແມ່ນແລ່ນເພື່ອຣາຊອານາຈັກໂດຍມີຈຸດສຸມໃສ່ທີ່ບໍ່ແບ່ງແຍກ. ມັນແມ່ນທີຂອງພວກເຮົາໃນຂະບວນແຫ່ອັນຍາວນານນີ້ທີ່ຈະຮ້ອງເພງເກົ່າແກ່ເຫຼົ່ານັ້ນ: "*ນີ້ເປັນມື້ທີ່ພຣະຜູ້ເປັນເຈົ້າໄດ້ຊົງສ້າງ ເຮົາຈະຊົມຊື່ນແລະຍິນດີໃນມື້ນັ້ນ*" (ພສສ 118:24). ຕະຫຼອດພຣະຄັມພີ, ພຣະເຈົ້າຊົງເຊື້ອເຊີນພວກເຮົາໃຫ້ທົດສອບຄວາມສັດຊື່ຂອງພຣະອົງ. ພຣະເຢຊູຊົງກ່າວວ່າ:"*ຈົ່ງເຊົາກັງວົນຢ່າງບໍ່ຢຸດຢັ້ງ. ມາຫາເຮົາແລະເບິ່ງວ່າເຮົາຈັດຫາໃຫ້ເຈົ້າແນວໃດ.*" ອັນນີ້ແມ່ນຄວາມລັບຂອງຄວາມສຸກ-ຄວາມກະຕືລືລົ້ນຢ່າງບໍ່ຢຸດຢັ້ງໃນການເພິ່ງພາອາສັຍພຣະເຈົ້າ.

*ວັດທະນະທັມຂອງພວກເຮົາໃຫ້ຄວາມສຳຄັນກັບວັດຖຸສິ່ງຂອງຢ່າງບໍ່ດີຕໍ່ສຸຂພາບດ້ວຍວິທີໃດແດ່?*

## 3. ລູກາ 12:31-34

31 *ແຕ່ຈົ່ງຊອກຫາຣາຊອານາຈັກຂອງພຣະອົງ ແລ້ວສິ່ງເຫຼົ່ານີ້ຈະຊົງເພີ່ມເຕີມໃຫ້.* 32 *ແກະຝູງນ້ອຍເອີຍ, ຢ່າຊູ່ຢ້ານ ເພາະພຣະບິດາ*
*ຂອງພວກທ່ານຊົງຊອບພຣະທັຍຈະຊົງປະທານຣາຊອານາຈັກໃຫ້ແກ່ພວກທ່ານ.* 33 *ຈົ່ງຂາຍສິ່ງຂອງທີ່ພວກທ່ານມີຢູ່ໃຫ້ເປັນທານ ຈົ່ງ*
*ເຮັດຖົງເງິນອັນບໍ່ຮູ້ເກົ່າໄວ້ສຳລັບຕົນ ຄືໃຫ້ມີຊັບສົມບັດໄວ້ໃນສວັນຊຶ່ງບໍ່ຮູ້ໝົດ ທີ່ຂະໂມຍເຂົ້າໄປໃກ້ບໍ່ໄດ້ແລະທີ່ມອດທຳລາຍບໍ່ໄດ້.*
34 *ເພາະວ່າຊັບສົມບັດຂອງທ່ານຢູ່ທີ່ໃດ ໃຈຂອງທ່ານກໍຢູ່ທີ່ນັ້ນແຫຼະ.*

ພຣະເຢຊູໄດ້ຊົງຮຽກເອີ້ນໃຫ້ພວກເຮົາມີຄວາມອຸທິດຕົນດ້ວຍໃຈດຽວຕໍ່ພຣະອົງໃນໂລກທີ່ມີຫົວໃຈແຕກແຍກ. ບໍ່ເທົ່າໃດປີກ່ອນໜ້ານີ້, ຂ້າພະເຈົ້າມີ ແລບແຣເດີ ຣິທຣີເວີ (Labrador Retriever) ສີເຫຼືອງ-ປະເພດຂອງໂຕໝາ-ຊື່ວ່າ ທາວເຊີ (Towser), ແລະມັນມີຊີວິດຢູ່ເໝາະສົມກັບສາຍພັນຂອງມັນ. ມັນມັກໃນການຄາບເອົາຂອງຄືນມາ. ມັນແມ່ນສິ່ງຂອງມັນ. ໃນຕອນເຊົ້າໆກ່ອນໂມງໄປການ, ຂ້າພະເຈົ້າແລະໝາມັກພາກັນໄປທີ່ໃກ້ໜອງນ້ຳເພື່ອຝຶກມັນ. ມັນມັກໄມ້ຄ້ອນທີ່ຂ້າພະເຈົ້າຄວ່າງລົງໄປໃນໜອງນ້ຳໃຫ້ມັນແລ່ນໄປຄາບເອົາຄືນມາ. ໂດຍຟັງສຽງໄມ້ຄ້ອນກະທົບນ້ຳດ້ວຍຫູຂອງມັນ, ມັນຈຸດສຸມຈັບຕາເບິ່ງຂ້າພະເຈົ້າເໝືອນແສງເລເຊີ. ມັນລໍຖ້າຢ່າງຄາດຫວັງທີ່ຈະໄດ້ຍິນຂ້າພະເຈົ້າອອກຄຳສັ່ງດ້ວຍພະຍາງດຽວ: "**ກັບມາ!**" ເມື່ອມັນໄດ້ຍິນຄຳນີ້, ມັນຈະກະໂດດລົງໄປໃນນ້ຳໃນທັນທີທັນໃດແລ້ວຄາບໄມ້ຄ້ອນກັບມາແລະເອົາມັນມາວາງໃສ່ຕີນຂອງຂ້າພະເຈົ້າ, ພ້ອມແລ້ວທີ່ຈະເຮັດອີກ. ຂ້າພະເຈົ້າຍັງເຫັນໜ້າຂອງມັນເຫຼືອບເບິ່ງຂ້າພະເຈົ້າ, ລໍຖ້າຢູ່. ມັນຮູ້ວ່າຂ້າພະເຈົ້າມັກຄວາມສົນໃຈຂອງມັນ. ຂ້າພະເຈົ້າຈະເຫັນຕາຂອງມັນບິດດ້ວຍຕາສີມືດຈ້ອງມາຍັງຂ້າພະເຈົ້າເພື່ອລໍຄອຍຄຳສັ່ງທີ່ໂດດເດັ່ນຂອງຂ້າພະເຈົ້າ

ການຈຸດສຸມໃສ່(focus)ປະເພດນີ້ແມ່ນສິ່ງທີ່ຂ້າພະເຈົ້າກຳລັງມຸ່ງໄປສູ່ການເປັນຜູ້ຕິດຕາມອົງພຣະຄຣິດ. ຂ້າພະເຈົ້າບໍ່ຕ້ອງການທີ່ຈະສຸມໃສ່ໄປທີ່ອຸປະກອນປະກອບສາກ, ຂໍ້ບົກພ່ອງຂອງຂ້າພະເຈົ້າ, ຄວາມຜິດຫວັງ, ຫຼືແມ້ກະທັ້ງພຣະພອນ. ຂ້າພະເຈົ້າບໍ່ຕ້ອງການທີ່ຈະໄດ້ຮັບການລົບກວນທັນເທໃຈໃນດ້ານໃດດ້ານນຶ່ງໃນຊີວິດນີ້. ໃນຖານະເປັນຜູ້ຕິດຕາມອົງພຣະຄຣິດ, ພວກເຮົາຖືກບັງຄັບໃຫ້ຫຼຽວເບິ່ງພຣະພັກ(ໜ້າ)ພຣະຜູ້ເປັນເຈົ້າຢ່າງເລິກເຊິ່ງ ແລະລໍຖ້າພຣະດຳຣັດ(ຄຳສັ່ງ)ຂອງພຣະອົງ. ພຣະອົງຊົງຄວບຄຸມມັນທັງໝົດ. ພຣະອົງຮຽບຮຽງຊິມໂຟນີ(symphony)ແຫ່ງຊີວິດ. ເມື່ອພວກເຮົາສຳນຶກເຖິງສິ່ງເຫຼົ່ານັ້ນ, ສິ່ງຕ່າງໆຈະນ້ອຍລົງຫຼາຍເມື່ອປຽບທຽບກັບພຣະເຈົ້າອົງພຣະບິດາເທິງຟ້າສວັນ.

*"ການສແວງຫາຣາຊອານາຈັກຂອງພຣະເຈົ້າກ່ອນ" ມີລັກສນະແນວໃດ?*

ເມື່ອທ່ານໄດ້ຫຼຽວເຫັນຣາຊອານາຈັກຂອງພຣະເຈົ້າ, ທັສນະຂອງທ່ານກໍ່ຈະປ່ຽນໄປ. ທ່ານຈະເບິ່ງບັນດາລູກຂອງທ່ານໂດຍແຕກຕ່າງກັນ. ທ່ານຈະກິນອາຫານທີ່ດີແລະມັກມັນຫຼາຍຍິ່ງຂຶ້ນ. ທ່ານຈະປ່ອຍບັນຫາທີ່ໜ້າລຳຄານເທິງບ່າຂອງທ່ານຊຶ່ງໄດ້ຕິດຕາມທ່ານມາເປັນເວລານານຫຼາຍປີ. **ທ່ານຈະຫາຍໃຈສະດວກຂຶ້ນ.** ທ່ານຈະໃຫ້ຫຼາຍກວ່າເກົ່າແລະຊື້ຂີ້ເຫຍື້ອ(junk)ຂອງອັປໂຍດໜ້ອຍລົງ. ທ່ານຈະບໍ່ມີຄວາມຢ້ານກົວຕໍ່: ຄວາມຕາຍ, ນະຮົກ, ແລະ ຫລຸມຝັງສົບ-ດ້ວຍເຫດວ່າຊີວິດແມ່ນການຜະຈົນພັຍອັນຕະຫຼອດໄປເປັນນິດຍິ່ງກວ່າກາແລກຊີ(galaxies)ແຫ່ງຫ້ອງອະວະກາດ. ຖ້າທ່ານເອົາມັນ(ການຜະຈົນພັຍ)ເຂົ້າມາ, ມັນຈະປ່ຽນແປງທຸກຢ່າງ. ມັນຈະກະແຈກກະຈາຍທຸກໆສັນຊາດຍານການຊ່ອຍຊີວິດ (self-saving instinct) ທຸກຢ່າງທີ່ທ່ານເຄີຍຮູ້ຈັກມາ. ໃນຍຸກສມັຍທີ່ພວກເຮົາເທີດທູນເຄົາລົບນັບຖື "ໃຫຍ່" ("**BIG**"), ພຣະເຈົ້າຊົງທ້າທາຍພວກເຮົາໃຫ້ດຳເນີນຊີວິດໃນຕົວພິມ "ນ້ອຍ" ("**small**") ຄິດເຖິງຜູ້ອື່ນກ່ອນຕົວເຮົາເອງ, ເອົາການໃຫ້ຫຼາຍກວ່າການຮັບ, ເອົາບໍລິການຮັບໃຊ້ແທນທີ່ຈະຮຽກຮ້ອງ, ແລະຕາຍເພື່ອຕົນເອງແທນທີ່ຈະມີຊີວິດຢູ່ເພື່ອຕົນເອງ. ນັ້ນຄືການມີຊີວິດຢູ່ໃນຣາຊອານາຈັກຂອງພຣະເຈົ້າ.

*ຄຣິສຕະຈັກຫຼືກຸ່ມຂອງພວກເຮົາມີບົດບາດອັນໃດແດ່ໃນການເພີ່ມຄວາມເຂັ້ມແຂງໃຫ້ແກ່ຄວາມເຊື່ອຂອງພວກເຮົາ?*

## ນຳໃຊ້ໃນຊີວິດ:

ຄວາມເຊື່ອຈະຂະຍັບຍ້າຍທີ່ຄວາມກັງວົນ. ຈົ່ງໃຊ້ນີ້ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ຈົດບັນຊີ.** ຈົ່ງຈົດບັນຊີລາຍການທີ່ທ່ານເຄີຍໄດ້ກັງວົນໃນລະຍະລະດູການຂອງຊີວິດ. ມີການກະທຳສະເພາະແນວໃດແດ່ທີ່ທ່ານສາມາດປະຕິບັດ ເພື່ອປ່ອຍຖິ້ມຄວາມຄິດທີ່ຫນ້າກັງວົນເຫຼົ່ານັ້ນ?
- **ມອບໃຫ້.** ທ່ານມີຫຍັງຢູ່ໃນພື້ນທີ່ເກັບຮັກສາເຄື່ອງຂອງທ່ານ ທີ່ອາດມີມູນຄ່າຫຼາຍສຳລັບຄົນອື່ນ? ຈົ່ງຂະຫຍາຍພື້ນທີ່ໂດຍການມອບສິ່ງຂອງທີ່ຢູ່ໃນພື້ນທີ່ນັ້ນອອກໄປ ແລ້ວເພີດເພີນກັບພື້ນທີ່ພິເສດທີ່ເກີດຈາກການປາສຈາກສິ່ງເຫຼົ່ານັ້ນ.
- **ອະທິຖານ.** ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ພຣະອົງຊົງສະແດງໃຫ້ທ່ານເຫັນວ່າທ່ານສາມາດເຊື່ອມຕໍ່ຫຼາຍຂຶ້ນກັບສິ່ງທີ່ພຣະອົງຊົງກຳລັງກະທຳໃນຄຣິສຕະຈັກຂອງທ່ານ.

**ຄວາມເຊື່ອທີ່ໝັ້ນໃຈດຶງພວກເຮົາອອກຈາກຄວາມກັງວົນ ແລະດຶງພວກເຮົາໄປສູ່ການສເລີມສລອງຊີວິດ. ພຣະເຈົ້າຊົງມອບໃຫ້ພວກເຮົາສິ່ງທີ່ໂລກບໍ່ສາມາດໃຫ້ແກ່ພວກເຮົາໄດ້.**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**